**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

# ບົດບັນທຶກ

# ກອງປະຊຸມຄົ້ນຄວ້າ ແລະ ປຶກສາຫາລື ກ່ຽວກັບການສະເໜີຂໍສຳປະທານ ພັດທະນາບ່ອນຈອດລົດ ໃຫ້ເປັນຕະຫຼາດແລງຖະໜົນລ້ານຊ້າງ ນະຄອນຫຼວງວຽງຈັນ (ຖະໜົນວຽງຣາຕີ) ຂອງບໍລິສັດ ສຸລິຊາວສິດເຕັ້ມ ຈຳກັດຜູ້ດຽວ

ໃນຕອນເຊົ້າ, ຂອງວັນສຸກ, ວັນທີ 14 ມິຖຸນາ 2024, ເວລາ 9 ໂມງ 00 ນາທີ, ຢູ່ທີ່ ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໄດ້ເປີດກອງປະຊຸມຄົ້ນຄວ້າ ແລະ ປຶກສາຫາລື ກ່ຽວກັບການສະເໜີຂໍສຳປະທານ ພັດທະນາບ່ອນຈອດລົດ ໃຫ້ເປັນຕະຫຼາດແລງຖະໜົນລ້ານຊ້າງ ນະຄອນຫຼວງວຽງຈັນ (ຖະໜົນວຽງຣາຕີ) ຂອງ ບໍລິສັດ ສຸລິຊາວສິດເຕັ້ມ ຈຳກັດຜູ້ດຽວ, **ໂດຍພາຍໃຕ້ການມອບໝາຍຂອງ ທ່ານ ຫົວໜ້າ ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ໃຫ້ທ່ານ ສິນລະປະກອນ ພິມມະໄຊສີ, ຮອງຫົວໜ້າ ພະແນກແຜນການ ແລະ ການລົງທຶນ ນະຄອນຫຼວງວຽງຈັນ ເປັນປະທານແທນ.** ຊຶ່ງມີບັນດາທ່ານຜູ້ຕາງໜ້າຂະແໜງການກ່ຽວຂ້ອງ ຂັ້ນ ນະຄອນຫຼວງວຽງຈັນ, ຜູ້ຕາງໜ້າ ກົມມໍລະດົກ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ເມືອງ ຈັນທະບູລີ ແລະ ບໍລິສັດ ສຸລິຊາວສິດເຕັ້ມ ຈຳກັດຜູ້ດຽວ ເຂົ້າຮ່ວມ (ມີລາຍຊື່ຜູ້ເຂົ້າຮ່ວມຕິດຄັດມາພ້ອມນີ້). ພາຍຫຼັງທ່ານປະທານ ກ່າວຈຸດປະສົງຂອງກອງປະຊຸມແລ້ວ ກໍໄດ້ພ້ອມກັນຄົ້ນຄວ້າປຶກສາຫາລື ປະກອບຄຳຄິດຄຳເຫັນ ແລະ ໄດ້ເປັນເອກະພາບກັນ ດັ່ງນີ້:

1) ຂໍສະແດງຄວາມຊົມເຊີຍຕໍ່ ບໍລິສັດ ສຸລິຊາວສິດເຕັ້ມ ຈຳກັດຜູ້ດຽວ ທີ່ມີຄວາມຄິດຢາກພັດທະນາບ່ອນຈອດລົດ ໃຫ້ເປັນຕະຫຼາດແລງຖະໜົນລ້ານຊ້າງ ນະຄອນຫຼວງວຽງຈັນ (ຖະໜົນວຽງຣາຕີ), ແຕ່ເນື່ອງຈາກວ່າ ຈຸດທີ່ບໍລິສັດ ສຸລິຊາວສິດເຕັ້ມ ຈຳກັດຜູ້ດຽວ ໄດ້ສະເໜີ ນັ້ນ, ຜ່ານມາ ສະມາຄົມທຸລະກິດທ່ອງທ່ຽວລາວ ໄດ້ສະເໜີຂໍພັດທະນາແລ້ວ (ຕາມໜັງສືສະເໜີ ສະບັບເລກທີ 004/ສທທລ, ລົງວັນທີ 19 ກຸມພາ 2024), ຊຶ່ງປັດຈຸບັນ ສະມາຄົມທຸລະກິດທ່ອງທ່ຽວລາວ ກຳລັງສຶກສາອອກແບບ ແລະ ຂຽນບົດວິພາກເສດຖະກິດ-ເຕັກນິກ ຂອງໂຄງການຢູ່. ສະນັ້ນ, ເພື່ອບໍ່ເປັນການສຶກສາສຳຫຼວດທີ່ທັບຊ້ອນກັນ ຈຶ່ງໃຫ້ບໍລິສັດ ສຸລິຊາວ ສິດເຕັ້ມ ຈຳກັດຜູ້ດຽວ ລໍຖ້າຜົນຂອງການສຶກສາສຳຫຼວດ ຂອງສະມາຄົມທຸລະກິດທ່ອງທ່ຽວລາວ ກ່ອນ ພາຍຫຼັງມີຂໍ້ມູນໃນການອອກແບບຂອງການພັດທະນາແລ້ວ ຈຶ່ງສະເໜີຂໍທິດຊີ້ນຳ ຈາກການນຳນະຄອນຫຼວງ ວຽງຈັນ ແລ້ວຈັດຕັ້ງປະຕິບັດໃນຂັ້ນຕໍ່ໄປ;
2) ສະເໜີໃຫ້ ຄະນະຮັບຜິດຊອບ ຄົ້ນຄວ້າຈັດກິດຈະກຳ ຖະໜົນວຽງຣາຕີ ແຄມຖະໜົນລ້ານຊ້າງ ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ (ຕາມຂໍ້ຕົກລົງ ຂອງທ່ານເຈົ້າຄອງ ນະຄອນຫຼວງວຽງຈັນ ສະບັບເລກທີ 603/ຈນວ, ລົງວັນທີ 25 ກໍລະກົດ 2022) ຊີ້ນຳໃຫ້ ສະມາຄົມທຸລະກິດທ່ອງທ່ຽວລາວ ສືບຕໍ່ສຶກສາສຳ ຫຼວດ ແລະ ອອກແບບກິດຈະກຳ ໃຫ້ສຳເລັດ ແລ້ວນຳສະເໜີ ການນຳນະຄອນຫຼວງວຽງຈັນ ພັດທະນາຕາມ ລະບຽບການ.

ກອງປະຊຸມໄດ້ປິດລົງໃນເວລາ 10 ໂມງ 30 ນາທີ ຂອງວັນດຽວກັນ.

ດັ່ງນັ້ນ, ຈຶ່ງເຮັດບົດບັນທຶກສະບັບນີ້ໄວ້ເພື່ອເປັນຫຼັກຖານ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ປະທານກອງປະຊຸມ** **ຜູ້ບັນທຶກ**

ສິນລະປະກອນ ພິມມະໄຊສີ

ວິສອນ ແພງສຸວັນ